ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 291 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 5.4.2021

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ໜັງສືສະເໜີຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 09/ທຫລ, ລົງວັນທີ 18 ມັງກອນ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 56/ພນ, ລົງວັນທີ 23 ກຸມພາ 2021.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີການເຮັດວຽກຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ກ່ຽວກັບວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານຫຼັກຊັບ ມີການພັດທະນາຢ່າງຕໍ່ເນື່ອງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ຂຽນເປັນຕົວອັກສອນຫຍໍ້ "ຄຄຊ" ຂຽນເປັນພາສາອັງກິດ "Lao Securities Commission" ຂຽນເປັນຕົວອັກສອນຫຍໍ້ "LSC" ແມ່ນການຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງເປັນການຈັດຕັ້ງສູງສຸດຂອງອົງການຄຸ້ມຄອງວຽກງານຫຼັກຊັບ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງວຽກງານຫຼັກຊັບ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ ດັ່ງນີ້:

1. ປະຕິບັດນິຕິກຳ ຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ວາງອອກຢ່າງເຂັ້ມງວດ;
2. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານ ຫຼັກຊັບ ເພື່ອສະເໜີລັດຖະບານພິຈາລະນາ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ, ດຳລັດ ແລະ ລະບຽບການ ກ່ຽວກັບວຽກງານຫຼັກຊັບ;
4. ຕິດຕາມການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ ແລະ ດຳລັດ ກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະໄລຍະ ເພື່ອລາຍງານລັດຖະບານ;
5. ຮັບຮອງລະບຽບການ ເປັນຕົ້ນ ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ແລະ ນິຕິກຳອື່ນທີ່ ກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງ ຫຼັກຊັບ;
6. ຮັບຮອງແຜນການເຄື່ອນໄຫວວຽກງານຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມ ການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ພິຈາລະນາ ອະນຸຍາດ, ໂຈະ ແລະ ຍົກເລີກ ການອອກຈຳໜ່າຍຫຼັກຊັບ ຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
8. ພິຈາລະນາ ອະນຸຍາດ, ໂຈະ ແລະ ຍົກເລີກ ການສ້າງຕັ້ງກອງທຶນ ເພື່ອການລົງທຶນ ຕາມການສະ ເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
9. ພິຈາລະນາ ອະນຸຍາດດຳເນີນທຸລະກິດ, ໂຈະການດຳເນີນທຸລະກິດ, ຖອນໃບອະນຸຍາດດຳເນີນ ທຸລະກິດຂອງ ບໍລິສັດຫຼັກຊັບ, ສາຂາ ແລະ ໜ່ວຍບໍລິການຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ບໍລິຫານກອງທຶນເພື່ອການລົງທຶນ ຕາມການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງ ຫຼັກຊັບ;
10. ພິຈາລະນາ ຮັບຮອງການເຄື່ອນໄຫວທຸລະກິດ, ໂຈະການເຄື່ອນໄຫວທຸລະກິດ, ຖອນໃບຮັບຮອງ ການເຄື່ອນໄຫວທຸລະກິດຂອງ ບໍລິສັດປະເມີນມູນຄ່າຊັບສິນ, ທະນາຄານດູແລຊັບສິນ, ບໍລິສັດ ກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
11. ພິຈາລະນາ ອອກ ຫຼື ຖອນ ໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ, ປະກອບຄຳເຫັນຕໍ່ການສ້າງຕັ້ງ ສະມາຄົມວຽກງານຫຼັກຊັບ ເພື່ອສະເໜີໃຫ້ພາກສ່ວນກ່ຽວຂ້ອງອະນຸຍາດສ້າງຕັ້ງ;
12. ພິຈາລະນາ ອະນຸຍາດ, ໂຈະ ແລະ ຍຸບເລີກ ການດຳເນີນທຸລະກິດຂອງຕະຫຼາດຫຼັກຊັບ ຕາມການ ເຫັນດີຂອງລັດຖະບານ;
13. ພິຈາລະນາ ອະນຸຍາດການດຳເນີນທຸລະກິດ, ໂຈະ ແລະ ຍຸບເລີກ ການດຳເນີນທຸລະກິດຂອງ ສູນ ຮັບຝາກຫຼັກຊັບ ຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
14. ຊຸກຍູ້ ແລະ ປຸກລະດົມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນພັດທະນາວຽກງານ ຫຼັກຊັບ ໂດຍສະເພາະແມ່ນການຊຸກຍູ້ບໍລິສັດຈາກທຸກຂະແໜງການທຸລະກິດ ເຂົ້າຈົດທະບຽນໃນ

ຕະຫຼາດຫຼັກຊັບ;

15. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບ ການຄຸ້ມຄອງ ແລະ ພັດທະນາ ວຽກງານຫຼັກຊັບ;
16. ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ;
17. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງ ລັດຖະບານ.

### ມາດຕາ 4 ຂອບເຂດສິດ

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີຂອບເຂດສິດ ດັ່ງນີ້:

1. ອອກ ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບວຽກງານ ຫຼັກຊັບ;
2. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ອົງການສືບສວນ-ສອບສວນ ກ່ຽວກັບວຽກ ງານຫຼັກຊັບ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ ຕາມການສະເໜີຂອງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ສະເໜີຍົກເວັ້ນການຈັດຕັ້ງປະຕິບັດບາງເນື້ອໃນຂອງນິຕິກຳກ່ຽວກັບວຽກງານຫຼັກຊັບ ຕໍ່ ລັດຖະບານ ເພື່ອພິຈາລະນາ;
4. ຍົກເວັ້ນການຈັດຕັ້ງປະຕິບັດບາງເນື້ອໃນ ຫຼື ທັງໝົດຂອງນິຕິກຳ ທີ່ຕົນອອກ ຫຼື ຮັບຮອງ ຕາມ ການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ພິຈາລະນາມາດຕະການທາງບໍລິຫານຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ກົດໝາຍວ່າດ້ວຍຫຼັກຊັບ ຕາມການສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
6. ຮຽກເອົາຂໍ້ມູນ, ຄຳໃຫ້ການ, ເອກະສານ ກ່ຽວກັບການເຄື່ອນໄຫວບັນຊີເງິນຈາກ ທະນາຄານ ທຸລະກິດ, ບັນຊີຫຼັກຊັບ ແລະ ຂໍ້ມູນອື່ນ ຈາກພາກສ່ວນທີ່ກ່ຽວຂ້ອງ;
7. ມີຄຳເຫັນຕໍ່ການປະຕິບັດ ການຍ້ອງຍໍ, ຊົມເຊີຍ ແລະ ນຳໃຊ້ມາດຕະການວິໄນ ຕໍ່ພະນັກງານ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ປະຕິບັດໜ້າທີ່ດີເດັ່ນ ຫຼື ລະເມີດລະບຽບການ, ກົດໝາຍ ຕາມລະບຽບການ;
8. ມອບສິດ ແລະ ໜ້າທີ່ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການເຄື່ອນໄຫວວຽກ ງານໃດໜຶ່ງ ກ່ຽວກັບການຄຸ້ມຄອງວຽກງານຫຼັກຊັບ;
9. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງລັດຖະບານ.

### ມາດຕາ 5 ໜ້າທີ່ ແລະ ຂອບເຂດສິດ ຂອງ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຮັບຜິດຊອບ ຊີ້ນຳ-ນຳພາ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍການວາງ ທິດທາງ, ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງຢູ່ພາຍໃນປະເທດ, ພົວພັນຮ່ວມມືກັບຕ່າງປະເທດ ແລະ ສາກົນ;
2. ເປັນປະທານກອງປະຊຸມສາມັນ ແລະ ວິສາມັນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ລາຍງານຜົນການເຄື່ອນໄຫວວຽກງານໃນແຕ່ລະໄລຍະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕໍ່ ລັດຖະບານ;

4. ແບ່ງຄວາມຮັບຜິດຊອບໃຫ້ ແຕ່ລະທ່ານໃນຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ເປັນຜູ້ລົງລາຍເຊັນ ກ່ຽວກັບ ເອກະສານທາງດ້ານນິຕິກຳ ແລະ ເອກະສານທາງການຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ;
6. ຮຽກປະຊຸມສາມັນ ແລະ ວິສາມັນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 6 ໜ້າທີ່ ແລະ ຂອບເຂດສິດ ຂອງ ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**

ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ມີ ໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ປະຕິບັດໜ້າທີ່ແທນ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມການມອບໝາຍຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ລົງລາຍເຊັນກ່ຽວກັບເອກະສານທາງດ້ານນິຕິກຳ ແລະ ເອກະສານທາງການຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມການມອບໝາຍຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

ນອກຈາກ ໜ້າທີ່ ແລະ ຂອບເຂດສິດ ທີ່ກຳນົດຂ້າງເທິງ ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ປະຈຳການ ຍັງມີ ໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຊີ້ນຳ-ນຳພາລວມ ກ່ຽວກັບການເຄື່ອນໄຫວວຽກງານປະຈຳວັນຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສະເໜີ ຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາກ່ຽວກັບເປົ້າໝາຍທີ່ຈະເປັນຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ອອກ ຂໍ້ຕົກລົງ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ບຸກຄະລາກອນຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ສະເໜີປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອອະນຸມັດຮຽກປະຊຸມວິສາມັນ ໃນກໍລະນີຈຳເປັນ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 7 ໂຄງປະກອບກົງຈັກ**

ກົງຈັກຊ່ວຍວຽກຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ແມ່ນຖືເອົາ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ປະກອບມີ ດັ່ງນີ້:

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຮອງປະທານ, ຜູ້ປະຈຳການ;

3. ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
4. ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນກໍາມະການ;
5. ຮອງລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນກໍາມະການ;
6. ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນກໍາມະການ;
7. ຮອງລັດຖະມົນຕີ ກະຊວງຍຸຕິທໍາ ເປັນກໍາມະການ;
8. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນກໍາມະການ;
9. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນກໍາມະການ;
10. ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເປັນກໍາມະການ;
11. ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນເລຂາ.

## ໝວດທີ 4
### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 9 ຫຼັກການ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ຄະນະກໍາມະການຄຸ້ມຄອງຫຼັກຊັບ ເຄື່ອນໄຫວວຽກງານຕາມຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລື ແລະ ຕົກລົງວຽກງານເປັນໝູ່ຄະນະ, ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານແບ່ງງານ ໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ໂດຍຖືເອົາກອງປະຊຸມເປັນຮູບການເຄື່ອນໄຫວຕົ້ນຕໍ;
2. ທຸກການເຄື່ອນໄຫວຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ ແມ່ນອີງໃສ່ ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງ ລັດຖະບານ, ນໍາເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ.

**ມາດຕາ 10 ແບບແຜນວິທີເຮັດວຽກ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ຄະນະກໍາມະການຄຸ້ມຄອງຫຼັກຊັບ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບ ປະກອບດ້ວຍກອງປະຊຸມ ສາມັນ ແລະ ວິສາມັນ. ກອງປະຊຸມສາມັນເປີດຂຶ້ນສາມເດືອນຕໍ່ຄັ້ງ, ສ່ວນກອງປະຊຸມວິສາມັນສາມາດເປີດຂຶ້ນເວລາໃດກໍໄດ້ ຖ້າມີຄວາມຈໍາເປັນ ຕາມການຮຽກຂອງປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ ຫຼື ຕາມການສະເໜີຂອງຮອງປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຜູ້ປະຈໍາການ ຫຼື ຕາມການສະເໜີຂອງກໍາມະການຫຼາຍກວ່າເຄິ່ງໜຶ່ງ;
2. ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອ ມີຄະນະກໍາມະການເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງຂອງ ຈໍານວນຄະນະກໍາມະການທັງໝົດ;
3. ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບຕົກລົງບັນຫາ ໂດຍຖືເອົາຕາມສຽງສ່ວນຫຼາຍ ຂອງຄະນະກໍາມະການທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີຫາກມີສຽງເທົ່າກັນ ສຽງຂອງປະທານກອງປະຊຸມເປັນອັນຕັດສິນ.

## ໝວດທີ 5
### ບົດບັນຍັດສຸດທ້າຍ

**ມາດຕາ 11 ງົບປະມານ**

ງົບປະມານ ທີ່ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ, ປະກອບວັດຖຸເຕັກນິກ, ກໍ່ສ້າງພື້ນຖານໂຄງລ່າງ ແລະ ຍົກລະດັບບຸກຄະລາກອນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແມ່ນມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບ.

ມອບໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຜູ້ຮັບຜິດຊອບຄຸ້ມຄອງບໍລິຫານງົບປະມານເຂົ້າໃນການເຄື່ອນໄຫວວຽກງານດ້ວຍຕົນເອງ.

**ມາດຕາ 12 ເຄື່ອງໝາຍ ແລະ ຕາປະທັບ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີເຄື່ອງໝາຍ ແລະ ຕາປະທັບ ສະເພາະຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການຂອງຕົນ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ຄະນະກຳມະການຄຸ້ມຄອງຫຼັກຊັບ, ທະນາຄານແຫ່ງ ສປປ ລາວ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 14 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ

ຜັນຄຳ ວິພາວັນ